# ສຶກສາປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງທີ່ເມືອງປາກແຊງແຂວງຫຼວງພະບາງ

**ກອງມະນີ ຄໍາສີ [1], ວິນັດ ເມກທະນາວັນ[2], ກົນນາລີ ທິບພະພອນ[3], ດາລີວອນ ແກ້ວປະເສີດ[4]*

*[1] ນັກສຶກສາປະລິນຍາໂທ ສາຂາການສຶກສາ ແລະ ການພັດທະນາ, [2,3,4] ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

*[1] ໂຮງຮຽນມັດທະຍົມສົມບູນສົບແຈກ ເມືອງປາກແຊງ ແຂວງຫຼວງພະບາງ*

---

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ມີວັດຖຸປະສົງ ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງທີ່ເມືອງປາກແຊງ ແຂວງຫຼວງພະບາງ. ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າແມ່ນໂຮງຮຽນມັດທະຍົມສົມບູນ 3 ແຫ່ງຂອງເມືອງປາກແຊງ ໄດ້ແກ່ ໂຮງຮຽນມັດທະຍົມສົມບູນປາກເກງ, ໂຮງຮຽນມັດທະຍົມສົມບູນສົບແຈກ ແລະ ໂຮງຮຽນມັດທະຍົມສົມບູນປາກແຊງລວມນັກຮຽນຈໍານວນ 89 ນ້ອງ ທີ່ສັງກັດຢູ່ໂຮງຮຽນມັດທະຍົມຕອນຕົ້ນ ຊັ້ນ ມ.4 ທີ່ເມືອງປາກແຊງ. ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນແບບສອບຖາມປະເມີນຄ່າ 5 ລະດັບ ແລະ ວິເຄາະຂໍ້ມູນສະຖິຕິຖົດຖອຍພະຫຸຄູນ. ຜົນການຄົ້ນຄວ້າພົບວ່າ ປັດໄຈທີມີອິດທິພົນຕໍ່ກັບການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ລວມມີ ປັດໄຈດ້ານຄູສອນ ໄດ້ຄ່າ Beta = 0.537, ຢ່າງມີໄລຍະສໍາຄັນທາງສະຖິຕິ P-value = 0.000; ຄ່າສໍາປະສິດພະຫຸຄູນ ເທົ່າກັບ 0.537 ແລະ ປັດໄຈດ້ານເສດຖະກິດ ໄດ້ຄ່າ Beta = 0.268, ຢ່າງມີໄລຍະສໍາຄັນທາງສະຖິຕິ P-value = 0.011; ຄ່າສໍາປະສິດພະຫຸຄູນ ເທົ່າກັບ 0.268.

**ຄໍາສັບສໍາຄັນ:** *ປັດໄຈກ່ຽວກັບຄູ, ປັດໄຈດ້ານເສດຖະກິດ, ການເລືອກເຂົ້າຮຽນ, ຊັ້ນມັດທະຍົມຕອນປາຍ*

---

**ຕິດຕໍ່ພົວພັນ: ກອງມະນີ ຄໍາສີ, ໂທ: 020 99399881; ອີເມວ: khamsykongmany@gmail.com*

# A Study of the Factors Influencing the Decline of Upper Secondary Education in Pak Xeng District, Luang Prabang Province

**Kongmany KHAMSY[1], Vinath MEKTHANAVANH[2], Kinnaly THIPPHAPHONE[3], Dalivone KEOPASERTH[4]*
*[1]Master of Education and Development, [2,3,4]Faculty of Education, Souphanouvong University, Laos*
*[1]Sopchaek secondary school, Pakxeng district, Luang Prabang province*

## Abstract

This research aims to study the factors that contribute to the decline in upper secondary school enrolment in Pakxeng District, Luang Prabang Province. The target group used in the research is three secondary schools such as Pakkeng secondary school Sopchaek secondary school and Pakxeng secondary school total was 89 students from a junior high school in Pakxeng district. The instrument used to collect data was a 5-level questionnaire and statistical analysis of the data was done using multiple regression. The results found that the factors that influenced the decline in secondary school enrollment in Pak Xeng District, Luang Prabang Province were Teacher factors with a Beta value of 0.537, with a statistically significant interval P-value = 0.000; the coefficient of variation was 0.537 and Economic factors with a Beta value of 0.268, with a statistically significant interval P-value = 0.011; the coefficient of variation was 0.268.

**Key words:** *Teacher factor, Economic factor, selection, high school*

**Correspondence: Kongmany KHAMSY, Phone: +856 2099399881, Email: khamsykongmany@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສາຄັນຂອງບັນຫາ*

ໃນຂະແໜງການສຶກສາ ແລະ ກິລາໄດ້ຄົ້ນພົບບັນຫາ ແລະ ສິ່ງທ້າທາຍທີ່ສຳຄັນຫຼາຍຢ່າງ, ລວມທັງຜົນກະທົບຈາກການລະບາດຂອງໂຄວິດ19 (COVID-19) ອິດທິພົນຂອງການສຶກສາທີ່ເຮົາບໍ່ຄວນເບິ່ງຂ້າມ ແລະ ຄວນຖືເອົາວຽກງານການສຶກສາເປັນບູລິມະສິດໃນການພັດທະນາປະເທດ. ເພິ່ນຖືເອົາວັນທີ 24 ມັງກອນ ຖືກກຳນົດໃຫ້ເປັນວັນການສຶກສາສາກົນ ຕາມມະຕິຂອງອົງການສະຫະປະຊາຊາດ ແລະ ໃນຫົວຂໍ້ນີ້ແມ່ນ "ໃຫ້ບູຣິມະສິດ ດ້ານການສຶກສາ ເພື່ອລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ." ຂະນະທີ່ໃນປະເທດລາວ ການຮໍ່າຮຽນ ແລະ ການສຶກສາ ໃນຊັ້ນປະຖົມຈົນເຖິງລະດັບມັດທະຍົມ ຍັງພົບຄວາມຫຍຸ້ງຍາກ ແລະ ໜ້າເປັນຫ່ວງຢູ່ທັງຈະເປັນບັນຫາແກ່ຍາວໄປອີກຫລາຍປີ ຈົນມີຜົນກະທົບຕໍ່ການພັດທະນາຊັບພະຍາກອນມະນຸດຂອງປະເທດ ອັນເນື່ອງມາຈາກການຂາດແຄນຄູສອນ ແລະ ງົບປະມານ ດ້ານການສຶກສາມີໜ້ອຍ. ກະຊວງສຶກສາທິການ ແລະ ກິລາ (2025) ການສຶກສາມີຄວາມສຳຄັນຫຼາຍຕໍ່ການພັດທະນາປະເທດຊາດໂດຍລວມເພາະທຸກໆຂະແໜງການຂອງສັງຄົມແມ່ນຕ້ອງການຄົນມີຄວາມຮູ້ຄວາມສາມາດທີ່ຜ່ານລະບົບການສຶກສາທັງໃນ ແລະ ນອກລະບົບ ທີ່ເກັ່ງ ແລະ ມີຄຸນນະພາບສູງ. ລັດຖະບານ ສປປລາວ ໄດ້ກຳນົດວິໄສທັດໃນການພັດທະນາວັດທະນະທຳສັງຄົມຮອດປີ 2030 ດັ່ງນີ້: "ຊັບພະຍາກອນມະນຸດໄດ້ຮັບການພັດທະນາ ໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຕາມຄວາມຕ້ອງການ ຂອງການພັດທະນາເສດຖະກິດສັງຄົມແຫ່ງຊາດຫຼາຍຂຶ້ນລະດັບການສຶກສາ ຂອງພົນລະເມືອງລາວຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກ ທີ່ມີຄຸນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກວ່າ 75 ປີ. ພົນລະ ເມືອງລາວທຸກຄົນ ໄດ້ຮັບການສຶກສາ ທີ່ມີຄຸນນະພາບຢ່າງສະ ເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົວເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ ມີສຸຂະພາບເຂັ້ມ ແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດ ທະນາປະເທດຊາດໃຫ້ສີວິໄລຍືນຍົງ, ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້".ການສຶກສາ ແມ່ນມີຄວາມສຳຄັນຕໍ່ຊີວິດການເປັນຢູ່ ຂອງທຸກໆຄົນ ແລະ ປະຊາຊົນທົ່ວໄປພາຍໃນປະເທດ ຖ້າທຸກຄົນ ພາຍໃນປະເທດໄດ້ຮັບການສຶກສາຢ່າງທົ່ວເຖິງ ມີວິຊາອາຊີບທີ່ດີ ມີຄວາມຮູ້ ຄວາມສາມາດຮູ້ການອ່ານ-ການຂຽນ ເປັນພື້ນຖານແລ້ວ ອົງປະກອບທາງດ້ານການຮຽນຮູ້ທັງໝົດຈະເປັນພື້ນຖານເຮັດໃຫ້ຄຸນນະພາບຂອງຊີວິດດີຂຶ້ນຮູ້ບອກສອນລູກຫຼານໃຫ້ເຫັນຄວາມສຳຄັນຂອງການສຶກສາ. ຫ້ອງການສຶກສາທິການ ແລະ ກິລາເມືອງປາກແຊງ, (2023)ໂຮງຮຽນມັດທະຍົມຕອນຕົ້ນໃນ 7 ແຫ່ງ ດັ່ງຕາຕະລາງສະແດງໃຫ້ເຫັນລຸ່ມນີ້

ຕາຕະລາງສົມທຽບຈຳນວນນັກຮຽນແຕ່ລະສົກຮຽນຊັ້ນ ມ4-ມ5

| ສົກຮຽນ | ຈົບ ມ 4 | | ຕໍ່ຊັ້ນ ມ 5 | |
|---|---|---|---|---|
| | ລວມ | ຍິງ | ລວມ | ຍິງ |
| 2021-2022 | 334 | 154 | - | - |
| 2022-2023 | 319 | 135 | 138 | 41 |
| 2023-2024 | 231 | 118 | 106 | 36 |
| 2024-2025 | - | - | 81 | 34 |

ການເຂົ້າມາຮຽນຂອງນັກຮຽນຊັ້ນມັດທະຍົມ ເມືອງປາກແຊງໂດຍສ່ວນໃຫຍ່ ແມ່ນຢູ່ຫ່າງໄກສອກຫຼີກ, ກັນດານ ແລະ ຢູ່ໂຮງຮຽນ ຂາດແຄນຄູສອນ ອາໄສຄູອາສາສະໝັກ ຫຼື ຄູສອນທີ່ບໍ່ຖືກຕາມສາຍວິຊາ ທີ່ຕົນເອງໄດ້ຮຽນມາ, ນັກຮຽນທີ່ຢູ່ເຂດຫ່າງໄກສອກຫຼີກໃຊ້ເວລາດົນ ແລະ ລຳບາກໃນການເດີນທາງ ມາໂຮງຮຽນ;

ໂດຍສະເພາະແມ່ນລະດູຝົນ ແລະ ນັກຮຽນບໍ່ເຫັນຄຸນຄ່າຂອງການຮຽນຕໍ່ຊັ້ນມັດທະຍົມຕອນປາຍ ຍ້ອນວ່າພວກເຂົາເຈົ້າເຫັນນັກຮຽນຫຼັ້ນເອື້ອຍ, ຫຼັ້ນອ້າຍ ແລະ ພີ່ນ້ອງທີ່ຮຽນຈົບມັດທະຍົມຕອນປາຍ ແລ້ວບໍ່ໄປສຶກສາຕໍ່ ແລະ ກາຍເປັນແຮງງານດິບ, ບໍ່ມີບ່ອນເຮັດວຽກຮອງຮັບ, ບ່ອນທີ່ຮັບເຮັດວຽກກໍ່ໄດ້ຮັບຄ່າແຮງງານຕໍ່າ, ນັກຮຽນທີ່ເຂົ້າຮຽນໃນຊັ້ນ ມັດທະຍົມຕອນຕົ້ນ ບາງຄົນມີຄວາມຮູ້ພື້ນຖານດ້ານວິຊາຊີບຕໍ່າ ແລະ ມີບັນຫາທາງຄອບຄົວເຊັ່ນວ່າຄອບຄົວທຸກຍາກ, ເສດຖະກິດຄອບຄົວຂາດເຂີນ, ໄລຍະທາງໄປໂຮງຮຽນໄກ ຂາດແຄນຍານພາຫະນະຮັບສົ່ງ, ຄ່າໃຊ້ຈ່າຍເພື່ອຊື້ເຄື່ອງແບບນັກຮຽນ ແລະ ອຸປະກອນການສຶກສາ ບັນຫາເຫຼົ່ານີ້ ເປັນຜົນແກ່ການເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍຫຼູດລົງ.

ເມື່ອເຫັນໄດ້ຄວາມສໍາຄັນ ຂອງບັນຫາທີ່ເກີດຂຶ້ນໃນວົງການສຶກສາຂອງເມືອງປາກແຊງ, ແຂວງຫຼວງພະບາງ ດັ່ງນັ້ນ; ຜູ້ສຶກສາຈິ່ງສົນໃຈສຶກສາແນວທາງ ແລະ ວິທີແກ້ໄຂຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ. ເພື່ອເປັນປະໂຫຍດຕໍ່ຜູ້ບໍລິຫານໂຮງຮຽນ ຄູອາຈານຜູ້ສອນ ແລະ ຜູ້ປົກຄອງໄດ້ຮັບຮູ້ເຖິງວິທີແກ້ໄຂ ໄດ້ທ່ວງທັນເວລາເຮັດໃຫ້ຈໍານວນນັກຮຽນທີ່ບໍ່ມາເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍ ມີຈໍານວນໜ້ອຍທີ່ສຸດ ແລະ ຍັງເປັນການສົ່ງເສີມຂວັນກໍາລັງໃຈໃຫ້ນັກຮຽນສາມາດສໍາເລັດການຮຽນ ໃນເວລາອັນຄວນຕາມຫຼັກສູດການສຶກສາກໍານົດໄວ້ເພື່ອໃຫ້ຄົນໃນຊາດມີຄວາມຮູ້ຄວາມສາມາດເປັນກໍາລັງແຮງທີ່ເຂັ້ມແຂງ ໂດຍເນັ້ນໃສ່ການສຶກສາເປັນເຂັມທິດໄປສູ່ແນວທາງໃນການພັດທະ ນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງຕໍ່ໄປເປັນກ້າວໆ ຕາມຍຸກສະໄໝ.

*1.2. ຄໍາຖາມຂອງການຄົ້ນຄວ້າ*

1. ປັດໄຈໃດ ທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ?

*1.3. ຈຸດປະສົງຂອງການຄົ້ນຄວ້າ*

1. ເພື່ອສຶກສາປັດໄຈທີ່ສົ່ງຜົນການເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ ສຶກສາແນວຄິດ, ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການເຂົ້າຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ດັ່ງນີ້:

ແກ້ວບົວລະເພັດ ແລະ ຄະນະ (2021) ການຄົ້ນຄວ້າໃນຫົວຂໍ້ ການສຶກສາສາເຫດທີ່ພາໃຫ້ຈໍານວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງ ຫຼູດລົງ, ກໍລະນີສຶກສາ: ມະຫາວິທະຍາໄລ ສຸພານຸວົງ ຈຸດປະສົງເພື່ອ: 1) ສຶກສານັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ມະຫາວິທະຍາໄລສຸພານຸວົງຫຼູດລົງ 2) ສຶກສາສາເຫດທີ່ພາໃຫ້ຈໍານວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າ ຮຽນຢູ່ມະຫາວິທະຍາໄລ ສຸພານຸວົງ ຫຼູດລົງ ແລະ 3) ສຶກສາຄວາມສໍາພັນລະຫວ່າງສາເຫດກັບນັກຮຽນມາ ສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມະຫາວິທະຍາໄລ ສຸພານຸວົງ ຫຼູດລົງ ການເກັບກໍາຂໍ້ມູນໄດ້ນໍາໃຊ້ແບບ ສອບຖາມລົງເກັບກໍາຂໍ້ມູນນໍານັກຮຽນໂຮງຮຽນມັດທະຍົມຕອນປາຍ ແລະ ນັກສຶກສາໂຮງຮຽນວິຊາຊີບຈໍານວນ 750 ຄົນ ແລະ ລົງສໍາພາດນໍາພະນັກງານການນໍາຂອງພະແນກສຶກສາທິການ ແລະ ກິລາ ໃນບັນດາແຂວງພາກເໜືອ ຂອງ ສປປ ລາວ ຈໍານວນ 15 ຄົນ. ການວິເຄາະຂໍ້ມູນແມ່ນນໍາໃຊ້ການວິເຄາະເນື້ອໃນ ແລະ ໂປແກຣມ SPSS version 25 ເພື່ອຊອກຫາຄວາມຖີ່ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ, ການຫາຄ່າສໍາປະສິດສະຫະສໍາ ພັນເພຍສັນ ແລະ ການວິເຄາະການຖົດຖອຍພະຫຸຄູນ. ຜົນການຄົ້ນຄວ້າຄັ້ງນີ້ ພົບວ່າ: ໜຶ່ງ, ນັກຮຽນມາສອບເສັງເຂົ້າຮຽນ ຢູ່ ມສ ຫຼູດລົງ ຢູ່ໃນລະດັບປານກາງ, ໃນນັ້ນເຫັນວ່າ: ຄວາມຫຍຸ້ງຍາກ ໃນການເດີນທາງ, ພັກເຊົາ ແລະ ມີຄ່າໃຊ້ຈ່າຍສູງ ໃນການມາສອບເສັງ ແລະ ມີທາງເລືອກຮຽນບ່ອນອື່ນຢູ່ໃນລະດັບຫຼາຍ; ນັກຮຽນມາລົງທະບຽນເຂົ້າຮຽນ ຢູ່ ມສ ຫຼູດລົງ ຢູ່ໃນລະດັບປານກາງ, ໃນນັ້ນເຫັນວ່າ ນັກຮຽນຢາກຮຽນໃນສາຂາຮຽນທີ່ຄົນນິຍົມ ແຕ່ໂກຕ້າຮັບມີ ຈໍານວນຈໍາກັດ ແລະ ເສັງໄດ້ແຕ່ບໍ່ສາມາດໃຊ້ຈ່າຍຄ່າຮຽນຕ່າງໆ ຢູ່ໃນລະດັບ ຫຼາຍ; ສອງ, ສາເຫດທີ່ພາໃຫ້ຈໍານວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມສ ຫຼູດລົງ ຢູ່ໃນລະດັບ ປານກາງ. ໃນນັ້ນ, ສາເຫດທີ່ກ່ຽວກັບສັງຄົມ ແລະ ເສດຖະກິດ ຢູ່ໃນລະດັບຫຼາຍ; ສ່ວນສາເຫດທີ່ກ່ຽວກັບ ມະຫາວິທະຍາໄລ, ຄອບຄົວ, ການເລືອກຮຽນໃນວິຊາຊີບ ແລະ ຕົວນັກຮຽນ ສົ່ງຜົນຢູ່ໃນລະດັບປານກາງ. ສາມ, ສາເຫດທີ່ ມີຄວາມສໍາພັນກັບນັກຮຽນມາສອບເສັງເຂົ້າຮຽນຢູ່ ມສ ຫຼູດລົງ ມີ 4 ສາເຫດຄື: ສາເຫດທີ່ກ່ຽວກັບມະຫາວິທະຍາໄລ, ເສດຖະກິດ, ການເລືອກຮຽນໃນວິຊາຊີບ ແລະ ຕົວນັກຮຽນ. ພ້ອມດຽວກັນນັ້ນ ມີ 5 ສາເຫດທີ່ມີຄວາມສໍາພັນກັບນັກຮຽນລົງທະບຽນເຂົ້າຮຽນຢູ່ ມສ ຫຼູດລົງ ເຊັ່ນ: ສາເຫດທີ່ກ່ຽວກັບສັງຄົມ, ຄອບຄົວ, ມະຫາວິທະຍາໄລ, ຕົວນັກຮຽນ ແລະ ເສດຖະກິດ. ຜົນການຄົ້ນຄວ້າຄັ້ງນີ້ພົບວ່າ ໄດ້ສະແດງໃຫ້ເຫັນຫຼາຍ ສາເຫດທີ່ພາໃຫ້ນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນ ຢູ່ ມສ ຫຼູດລົງ ເຊິ່ງເປັນຫຼັກຖານຂໍ້ມູນທີ່ສໍາຄັນໃນ ການສ້າງແຜນຍຸດທະສາດ, ນະໂຍບາຍສອດຄ່ອງ, ແຜນຈັດຕັ້ງປະຕິບັດ ແລະ ຊອກຫາວິທີ ການປັບປຸງແກ້ໄຂສາເຫດ ດັ່ງກ່າວໃຫ້ໄດ້ຮັບຜົນດີ.

Siriopha, Mangkang & Koolnapadol (2021) ຄົ້ນຄວ້າໃນຫົວຂໍ້ ປັດໄຈທີ່ສົ່ງຜົນກະທົບຕໍ່ຄຸນນະພາບຂອງນັກຮຽນໃນສະຖາບັນການສຶກສາຂັ້ນພື້ນຖານ ສໍານັກງານການສຶກສາຊັ້ນປະຖົມສຶກສາ ສຣະແກ້ວ, ເຂດ 1 ຈຸດປະສົງເພື່ອ 1) ລະດັບປັດໄຈດ້ານການບໍລິຫານໂຮງຮຽນ, ຄູສອນ, ຫຼັກສູດ ແລະ ການມີສ່ວນຮ່ວມຂອງພໍ່ແມ່

(Lohday, 2022) ຄົ້ນຄວ້າໃນຫົວຂໍ້ ປັດໄຈທີ່ສົ່ງຜົນກະທົບຕໍ່ຜົນການຮຽນຂອງ ນັກສຶກສາທີ່ຮຽນໃນຫຼັກສູດພາສາອັງກິດທຸລະກິດ ທີ່ ມະຫາວິທະຍາໄລ ອະລາຍາ ອານົງກອນ ຣາຊະບັນດິດ ຣາຊະບັນດິດ ສຈ. ການຄົ້ນຄວ້າຄັ້ງນີ້ມີເປົ້າໝາຍ 1) ສຶກສາປັດໄຈທີ່ສົ່ງຜົນກະທົບຕໍ່ຜົນການຮຽນຂອງນັກສຶກສາທີ່ຮຽນພາສາອັງກິດທຸລະກິດ ທີ່ມະຫາວິທະຍາໄລ ອະລາຍາອະລົງກອນ ຣາຊະ

ບັນດິດ, 2) ສຶກສາຄວາມສຳພັນລະຫວ່າງຕົວແປທີ່ກ່ຽວຂ້ອງກັບນັກສຶກສາ, ຄອບຄົວ, ອາຈານ ແລະ ຮູບແບບການສອນກັບຜົນການຮຽນຂອງນັກສຶກສາທີ່ຮຽນພາສາອັງກິດທຸລະກິດ ແລະ 3) ສຶກສາຄວາມຄິດເຫັນຂອງ ນັກສຶກສາເພື່ອພັດທະນາແນວທາງການສອນພາສາອັງກິດທຸລະກິດໃຫ້ມີປະສິດທິພາບຫຼາຍຂຶ້ນ. ຕົວຢ່າງປະກອບມີນັກຮຽນ 87 ຄົນທີ່ ໄດ້ສຶກສາ VLE 106 Introduction to Business Communication ແລະ VLE 206 English for Office Communication ໃນພາກຮຽນທີ 1 ຂອງປີການສຶກສາ 2021, ເຊິ່ງໄດ້ຖືກຄັດເລືອກໂດຍການສຸ່ມແບບງ່າຍໆ. ເຄື່ອງມືຄົ້ນຄວ້າແມ່ນ ແບບສອບຖາມທີ່ມີມູນຄ່າ IOC ຂອງ 0.86. ຂໍ້ມູນໄດ້ຖືກວິເຄາະໂດຍການຊອກຫາເປີເຊັນ, ວິທີການ, ແລະມາດຕະຖານ deviations ແລະຄ່າສຳປະສິດການພົວພັນປັດຈຸບັນຂອງ Pearson. ຜົນການຄົ້ນຄວ້າພົບວ່າ 1. ປັດໄຈຂອງຄູແມ່ນປັດໄຈທີ່ມີຜົນກະທົບສູງສຸດຕໍ່ຜົນການຮຽນໃນກຸ່ມວິຊາພາສາອັງກິດທຸລະກິດ ( $\bar{x}$ = 4.50, SD = 0.50), ຖັດມາແມ່ນປັດໄຈຂອງນັກຮຽນ ( $\bar{x}$= 4.25, SD = 0.49 ) ຈາກນັ້ນ ປັດໄຈຄອບຄົວ ( $\bar{x}$= 4.22 , SD = 0.85 ) ແລະ ປັດໄຈສຸດທ້າຍແມ່ນປັດໄຈການຮຽນ-ການສອນ X 7.0 . 2. ຜົນຂອງການວິເຄາະຄ່າສຳປະສິດຄວາມສຳພັນຂອງຕົວແປຂອງນັກຮຽນ, ຄອບຄົວ, ຄູ ແລະ ແບບການສອນ ພົບວ່າຕົວແປທັງໝົດມີຄວາມສຳພັນທາງບວກ. Nurmalitasari, Awang Long & Faizuddin Mohd Noor (2023) ຄົ້ນຄວ້າໃນຫົວຂໍ້ ປັດໃຈທີ່ມີອິດທິພົນຕໍ່ນັກຮຽນທີ່ເລີກຮຽນໃນການສຶກສາຊັ້ນສູງ ຈຸດປະສົງເພື່ອ ນັກຮຽນທີ່ອອກໂຮງຮຽນ ແມ່ນ ເປັນບັນຫາຮ້າຍແຮງໃນການສຶກສາຊັ້ນສູງ ໃນຫຼາຍປະເທດ. ການອອກຂອງນັກສຶກສາມີຜົນກະທົບ ທາງລົບ ຢ່າງຫຼວງຫຼາຍ ບໍ່ພຽງແຕ່ກ່ຽວກັບບຸກຄົນ, ແຕ່ຍັງທັງວິທະຍາໄລ ແລະ ເສດຖະກິດ-ສັງຄົມ. ດັ່ງນັ້ນ, ການປ້ອງກັນການເລີກຮຽນ ແມ່ນ ສິ່ງທ້າທາຍ ຫຼາຍສຳລັບ ສະຖາບັນການສຶກສາຊັ້ນສູງ. ສະນັ້ນ, ການຮູ້ເຖິງປັດໃຈທີ່ ສົ່ງຜົນໃຫ້ນັກຮຽນເລີກຮຽນ ແມ່ນບາດກ້າວທຳອິດ ທີ່ຈຳເປັນ ໃນການປ້ອງກັນ ນັກຮຽນອອກຈາກລະບົບການສຶກສາ. ການຄົ້ນຄວ້າໃຊ້ວິທີການສຶກສາປະສົມຄຸນນະພາບ ແລະ ປະລິມານ. ເພື່ອກຳນົດປັ່ຽນທີ່ສົ່ງຜົນກະທົບ ຕໍ່ການເລີກຮຽນ ຂອງນັກຮຽນ, ພວກເຮົາໃຊ້ວິທີການທີ່ມີຄຸນນະພາບ, ຫຼັງຈາກນັ້ນ ຕົວປ່ຽນທີ່ພົບ ເຫັນຈະຖືກກວດສອບ ໂດຍ ສາທາລະນະ ແລະ ຜູ້ມີສ່ວນຮ່ວມໂດຍ ໃຊ້ວິທີການ ປະລິມານ. ຫຼັງຈາກນັ້ນ, ແມ່ນການຈັດປະເພດ ຕົວປ່ຽນໂດຍ ໃຊ້ວິທີການ ແບບປະລິມານ. ການສຶກສາຄັ້ງນີ້ໄດ້ສັງເກດເບິ່ງນັກສຶກສາທີ່ ອອກຈາກມະຫາວິທະຍາໄລເອກະຊົນ ໃນພາກກາງ ຂອງເກາະຊວາ, ອິນໂດເນເຊຍ. ຜົນການຄົ້ນຄວ້າ ພົບວ່າ ປັດໄຈເສດຖະກິດ ແມ່ນ ມີອິດທິພົນຫຼາຍທີ່ສຸດຕໍ່ກັບນັກຮຽນທີ່ເລີກຮຽນໃນການສຶກສາຊັ້ນສູງ. ຜົນໄດ້ຮັບ ຂອງການຄົ້ນຄວ້າຄັ້ງນີ້ ມີຄວາມສຳຄັນ ສຳລັບມະຫາວິທະຍາໄລໃນປະເທດອິນໂດເນເຊຍ, ໂດຍສະເພາະ ເກາະຊວາ, ເພື່ອເອົາຊະນະບັນຫານັກຮຽນອອກຈາກລະບົບການສຶກສາ. ນອກຈາກນັ້ນ, ຜົນໄດ້ຮັບ ຂອງການຄົ້ນຄວ້ານີ້ຍັງເປັນປະ ໂຫຍດ ຕໍ່ການຄົ້ນຄວ້າຄັ້ງໃໝ່ອີກ ເພື່ອເປັນພື້ນຖານ ສຳລັບການຄາດຄະເນ ນັກສຶກສາທີ່ຈະອອກຈາກມະຫາວິທະຍາໄລໃນໄລຍະຕໍ່ໄປ.

Intharapan, Phuangsomjit & Buathong (2020) ສຶກສາເລື່ອງ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການໃຫ້ບຸດຫຼານເຂົ້າຮຽນໃນຊັ້ນມັດທະຍົມສຶກສາປີທີ່ 4 ໂຮງຮຽນວິທະຍາສາດຈຸລາລາດວິທະຍາໄລໃນເຂດພາກກາງ ແລະ ພາກຕາເວັນອອກ ຜົນວິໄຈປະກົດວ່າ 1) ປັດໄຈທີ່ກ່ຽວຂ້ອງກັບການຕັດສິນໃຈຂອງຜູ້ປົກຄອງໄດ້ແກ່ປັດໄຈດ້ານສື່ສຽງຂອງໂຮງຮຽນ ດ້ານຄ່າໃຊ້ຈ່າຍ ບຸກຄະລາກອນຂອງໂຮງຮຽນ ດ້ານວິຊາການ ດ້ານບໍລິຫານແລະສະວັດດີການ ແລະ ດ້ານອາຄານສະຖານທີ່ແລະສະພາບແວດລ້ອມຂອງໂຮງຮຽນ ໃນພາບລວມແລະລາຍດ້ານຢູ່ໃນລະດັບຫຼາຍ 2) ສົມການທຳນາຍປັດໄຈທີ່ສົ່ງຜົນຂອງຜູ້ປົກຄອງພົບວ່າ ປັດໄຈດ້ານວິຊາການເປັນປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງຢ່າງມີໄນສຳຄັນທາງສະຖິຕິທີ່ລະດັບ 0.01 ແລະສາມາດພະຍາກອນຄວາມຖືກຕ້ອງໄດ້ຮ້ອຍລະ 87.90 ເຊິ່ງຂຽນເປັນສົມການໄດ້ວ່າ Y Decision= -4.730-2.643 ແລະ 3) ແນວທາງຫຼັກໃນການສົ່ງເສີມໃຫ້ນັກຮຽນຊັ້ນມັດທະຍົມສຶກສາປີທີ່ 3 ເຂົ້າໂຮງຮຽນເດີມຄື ການພັດທະນາຄຸນນະພາບດ້ານວິຊາການ ສຳລັບແນວທາງເສີມປະກອບດ້ວຍ ການປະຊາສຳພັນຂ່າວສານຕ່າງໆ ໃຫ້ຮອບດ້ານທົ່ວເຖິງ ການພັດທະນາລະບົບການແນະແນວການສຶກສາ ການຈັດກິດຈະກຳສົ່ງເສີມແລະສ້າງແຮງບັນດານໃຈໃຫ້ນັກຮຽນເຂົ້າໃຈເຖິງຄວາມສຳຄັນຂອງການຮຽນວິທະຍາສາດ ການສົ່ງເສີມ ແລະ ຈັດກິດຈະກຳການແຂ່ງຂັນງານດ້ານສິ່ງປະດິດທັງພາຍໃນ ແລະ ພາຍນອກສະຖານການສຶກສາ.

## 3. ວິທີດຳເນີນການຄົ້ນຄວ້າ

ຜູ້ສຶກສາໄດ້ດຳເນີນການຄົ້ນຄວ້າເກັບລວບລວມຂໍ້ມູນດ້ວຍວິທີການດັ່ງນີ້:

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ນຳມາສຶກສາຄັ້ງນີ້ແມ່ນນັກຮຽນຊັ້ນມັດທະຍົມຕອນຕົ້ນ ມ4 ຢູ່ພາຍໃນເມືອງປາກແຊງ ຈຳນວນ 7 ແຫ່ງ ມີນັກຮຽນທັງໝົດ 231 ຄົນ, ຍິງ 118 ຄົນ

ກຸ່ມຕົວຢ່າງແມ່ນໄດ້ຈາກຈຳນວນປະຊາກອນທີ່ເປັນນັກຮຽນຊັ້ນມັດທະຍົມຕອນຕົ້ນ ມ 4 ຈຳນວນ 3 ແຫ່ງ ມີນັກຮຽນແມ່ນ 89 ຄົນ ຍິງ 49 ຄົນ

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນຄັ້ງນີ້ເປັນແບບສອບຖາມທີ່ຜູ້ສຶກສາສ້າງຂຶ້ນໂດຍສຶກສາຈາກແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງ ໂດຍແບບສອບຖາມມີ 3ພາກສ່ວນດັ່ງນີ້

<u>ສ່ວນທີ1:</u> ຂໍ້ມູນໂດຍທົ່ວໄປຂອງຜູ້ຕອບແບບສອບຖາມ ລັກສະນະຂອງຄຳຖາມແຕ່ລະຂໍ້ເປັນແບບສຳຫຼວດລາຍການປະກອບດ້ວຍ: ໂຮງຮຽນ, ເພດ, ອາຍຸ.

ສ່ວນທີ2: ການສອບຖາມຄວາມຄິດເຫັນກ່ຽວກັບປັດໃຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງທີ່ເມືອງປາກແຊງ ເປັນມາດຕາສ່ວນປະເມີນຄ່າ (Rating Scale) ມີ 5 ລະດັບຄວາມຄິດເຫັນຂອງນັກຮຽນ ຕາມວິທີ ຂອງ Likert Scale (Sisaat, 2017)

5: ໝາຍເຖິງນັກຮຽນມີລະດັບຄວາມຄິດເຫັນຫຼາຍທີ່ສຸດ

4: ໝາຍເຖິງນັກຮຽນມີລະດັບຄວາມຄິດເຫັນຫຼາຍ

3: ໝາຍເຖິງນັກຮຽນມີລະດັບຄວາມຄິດເຫັນປານກາງ

2: ໝາຍເຖິງນັກຮຽນມີລະດັບຄວາມຄິດເຫັນໜ້ອຍ

1: ໝາຍເຖິງນັກຮຽນມີລະດັບຄວາມຄິດເຫັນໜ້ອຍທີ່ສຸດ.

ເຊິ່ງປະກອບດ້ວຍ 6ດ້ານໄດ້ແກ່: 1. ດ້ານທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນ 2. ດ້ານຄວາມຄາດຫັວງຂອງຄອບຄົວ 3. ດ້ານຄູສອນ 4. ດ້ານຕົວນັກຮຽນເອງ 5. ດ້ານເສດຖະກິດ 6. ດ້ານສັງຄົມ

ສ່ວນທີ3: ຂໍ້ສະເໜີແນະຂອງຜູ້ຕອບແບບສອບຖາມກ່ຽວກັບປັດໃຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງທີ່ເມືອງປາກແຊງ

ໄລຍະເວລາທີ່ສຶກສາ: ໄລຍະເວລາທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນ 4ເດືອນ ເລີ່ມຈັດຕັ້ງປະຕິບັດແມ່ນຢູ່ໃນລະຫວ່າງເດືອນ 9-12 ທີ່ເມືອງປາກແຊງ ຂອງພາກຮຽນທີ I ສົກປີຮຽນ 2024 - 2025

*3.3 ວິທີເກັບກຳຂໍ້ມູນ*

ຜູ້ສຶກສາໄດ້ດຳເນີນການເກັບລວບລວມຂໍ້ມູນດ້ວຍຕົນເອງ ດ້ວຍວິທີການດັ່ງນີ້:

- ຜູ້ສຶກສາໄດ້ເຮັດໜັງສືສະເໜີ ໂດຍເຊັນຜ່ານຄະນະບໍດີ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ເພື່ອຂໍລົງເກັບກຳຂໍ້ມູນທີ່ເມືອງປາກແຊງ ແຂວງຫຼວງພະບາງ.
- ຜູ້ສຶກສາໄດ້ນຳໜັງສືສະເໜີຜ່ານຫ້ອງການສຶກສາທິການ ແລະກິລາ ເມືອງປາກແຊງ ເພື່ອຂໍອະນຸມັດໃນການລົງເກັບກຳຂໍ້ມູນນຳກຸ່ມຕົວຢ່າງ
- ຫລັງຈາກໄດ້ຮັບການອະນຸມັດແລ້ວ ຜູ້ສຶກສາໄດ້ລົງເກັບກຳຂໍ້ມູນໂດຍໃຊ້ເຄື່ອງມືແບບແບບສອບຖາມແຈກຢາຍຕາມກຸ່ມຕົວຢ່າງຈາກນັ້ນເກັບຂໍ້ມູນທີ່ໄດ້ມາທັງໝົດຄີໃສ່ຕາຕະລາງ excel ເພື່ອວິເຄາະຂໍ້ມູນ.

*3.4 ການວິເຄາະຂໍ້ມູນ*

ຜູ້ຄົ້ນຄວ້າໃຊ້ການວິເຄາະຂໍ້ມູນ ແລະ ປະມວນຜົນຂໍ້ມູນດ້ວຍການນຳເອົາຂໍ້ມູນທີ່ໄດ້ຈາກແບບສອບຖາມມາດຳເນີນການວິເຄາະເນື້ອໃນດ້ວຍໂປຣແກມສຳເລັດຮູບ IBM SPSS version 20 ເພື່ອສະຫຼູບປະເດັນຂອງປັດໃຈດ້ານຕ່າງໆທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ລວມທັງຂໍ້ມູນທີ່ເປັນເອກະສານປະກອບ ໂດຍຍຶດຖືຫຼັກການ ແລະ ທິດສະດີທີ່ກ່ຽວຂ້ອງ ເພື່ອນຳໄປສູ່ການອະທິບາຍຜົນໃນລັກສະນະທີ່ເປັນເຫດ ເປັນຜົນຕໍ່ກັບສະພາບຄວາມເປັນຈິງຂອງຂໍ້ມູນໃຫ້ຫຼາຍທີ່ສຸດ.

## 4. ຜົນການຄົ້ນຄວ້າ

*4. 1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ຕາຕາລາງ 1: ການວິເຄາະຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມ ກໍລະນີຈຳແນກຕາມເພດແລະໂຮງຮຽນ.

| ໂຮງຮຽນ | ຈຳນວນ | ສ່ວນຮ້ອຍ |
|---|---|---|
| ໂຮງຮຽນ ມສ ປາກເກງ | 30 | 33.7 |
| ໂຮງຮຽນ ມສ ສົບແຈກ | 30 | 33.7 |
| ໂຮງຮຽນ ມສ ປາກແຊງ | 29 | 32.6 |
| ຍິງ | 49 | 55.1 |
| ຊາຍ | 40 | 44.9 |
| ລວມ | 89 | 100.0 |

ຈາກຜົນຕາຕະລາງທີ 1: ສະແດງໃຫ້ເຫັນວ່າ ຜູ້ຕອບແບບສອບຖາມ ຈາກມັດທະຍົມສົມບູນປາກເກງ ມີຈຳນວນ 30 ຄົນ ກວມເອົາ 33.7 ສ່ວນຮ້ອຍ. ມັດທະຍົມສົມບູນ ສົບແຈກ ມີຈຳນວນ 30 ຄົນ ກວມເອົາ 33.7 ສ່ວນຮ້ອຍ ແລະ ມັດທະຍົມສົມບູນປາກແຊງ ມີຈຳນວນ 29 ຄົນ ກວມເອົາ 32.6 ສ່ວນຮ້ອຍ.

ຈາກຜົນຕາຕະລາງທີ 2: ສະແດງໃຫ້ເຫັນວ່າຜົນການວິເຄາະຂໍ້ມູນກ່ຽວກັບເພດ ມີຜູ້ຕອບແບບສອບຖາມແມ່ນນັກຮຽນທັງໝົດຈຳນວນ 89 ຄົນ ໃນນັ້ນພົບວ່າມີນັກຮຽນທີເປັນເພດຍິງທັງໝົດຈຳນວນ 49 ຄົນ ຄິດເປັນເປີເຊັນແມ່ນ 55.1% ແລະ ເພດຊາຍຈຳນວນ 40 ຄົນຄິດເປັນເປີເຊັນແມ່ນ 44.9% ສະແດງໃຫ້ເຫັນວ່າເພດຍິງກວມເປີເຊັນຫຼາຍກວ່າເພດຊາຍ.

ຕາຕະລາງ 3: ສ່ວນຮ້ອຍ ຈຳແນກຕາມອາຍຸ

| ລດ | ອາຍຸ | ຈຳນວນ | ສ່ວນຮ້ອຍ |
|---|---|---|---|
| 01 | 13 ປີ | 8 | 9.0 |
| 02 | 14 ປີ | 72 | 80.9 |
| 03 | 15 ປີ | 7 | 7.9 |
| 04 | 16 ປີ | 2 | 2.2 |
| | ລວມ | 89 | 100 |

ຈາກຜົນຕາຕະລາງ 3 ສະແດງໃຫ້ເຫັນວ່າຜົນການວິເຄາະຈຳແນກຕາມເພດ ມີຜູ້ຕອບແບບສອບຖາມແມ່ນນັກຮຽນທັງໝົດ 89 ຄົນ ໃນນັ້ນພົບວ່າມີນັກຮຽນອາຍຸ 13 ປີ ຈຳນວນ 8 ຄົນ ຄິດເປັນເປີເຊັນ 9.0 ສ່ວນຮ້ອຍ ທັດມາແມ່ນນັກຮຽນອາຍຸ 14 ປີ ຈຳນວນ 72 ຄົນ ຄິດເປັນເປີເຊັນ 80.9 ສ່ວນຮ້ອຍ ນັກຮຽນອາຍຸ 15 ປີ ຈຳນວນ 7 ຄົນ ຄິດເປັນເປີເຊັນ 7.9 ສ່ວນຮ້ອຍ ແລະ ນັກຮຽນອາຍຸ 16 ປີ ຈຳນວນ 2 ຄົນ ຄິດເປັນເປີເຊັນ 2.2 ສ່ວນຮ້ອຍ ທັງໝົດນັ້ນສະແດງໃຫ້ເຫັນວ່ານັກຮຽນອາຍຸ 14 ປີ ມີຈຳນວນຫຼາຍກວ່າໝູ່.

ຕາຕະລາງ 4: ສະແດງຕົວປ່ຽນທັງໝົດ

| Model | | Variables Entered | Variables Removed | Method |
|---|---|---|---|---|
| 1 | | X5, x2, x3, x1, x4[b] | . | Enter |
| | | a. Dependent Variable: y | | |
| | | b. All requested variables entered. | | |

ຈາກຜົນຕາຕະລາງ 4: ສະແດງໃຫ້ເຫັນວ່າ ແບບຈາລອງ Regression ໄດ້ນໍາໃຊ້ຕົວປ່ຽນຕົ້ນທັງໝົດ 5 ຕົວ $X_1$ ເຖິງ $X_5$ ເພື່ອຄາດຄະເນຄ່າຂອງ Y ໂດຍວິທີ Enter .

ຕາຕະລາງ 5: ສະແດງຄ່າສໍາປະສິດພະຫຸຄູນ ລະຫວ່າງຕົວປ່ຽນຕົ້ນ ກັບຕົວປ່ຽນຕາມ

| ຕົວແບບ | | ຄ່າຜິດຄວາມດ່ຽງ | | ຄ່າສໍາປະສິດ | t | P-value |
|---|---|---|---|---|---|---|
| | | B | Std. Error | Beta | | |
| 1 | ຄ່າຄົງທີ່ | 1.947 | 0.369 | | 5.271 | 0.000 |
| | $X_1$ | -0.083 | 0.065 | -0.118 | -1.284 | 0.203 |
| | $X_2$ | 0.407 | 0.072 | 0.537 | 5.652 | 0.000 |
| | $X_3$ | 0.003 | 0.064 | 0.004 | 0.042 | 0.967 |
| | $X_4$ | 0.202 | 0.077 | 0.268 | 2.608 | 0.011 |
| | $X_5$ | -0.057 | 0.076 | -0.073 | -0.744 | 0.459 |
| ຕົວປ່ຽນຕາມ: Y | | | | | | |

ຈາກຜົນຕາຕະລາງ 5 ຜົນການວິໄຈ ພົບວ່າຜົນການວິເຄາະປັດໄຈທີ່ມີຜົນ ຕໍ່ກັບການເລືອກເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ຜົນວິໄຈພົບວ່າ ມີຕົວປ່ຽນບາງຕົວເທົ່ານັ້ນທີ່ມີຜົນຕໍ່ການເລືອກເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ເຊິ່ງປະກອບດ້ວຍ 2 ກຸ່ມຄື: 1) ດ້ານປັດໄຈຄູສອນ ແລະ 2) ດ້ານປັດໄຈເສດຖະກິດ. ຜົນການວິໄຈປັດໄຈທີ່ມີອິດທິພົນ ຕໍ່ກັບການເລືອກເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ຢ່າງມີໄລຍະສໍາຄັນທາງສະຖິຕິ P-value $< 0.05$ ຕາມລໍາດັບດັ່ງນີ້: 1) ລໍາດັບທາອິດ ແມ່ນ ດ້ານປັດໄຈຄູສອນ ($\beta = 0.537$, P-value = 0.000) ເປັນປັດໄຈທີ່ມີອິດທິພົນສູງສຸດ ໃນທິດທາງດຽວກັນກັບການເລືອກເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ 2) ລໍາດັບສຸດທ້າຍ ແມ່ນປັດໄຈດ້ານເສດຖະກິດ ($\beta = 0.268$, P-value = 0.011) ເປັນປັດໄຈທີ່ມີອິດທິພົນໃນທິດດຽວກັນກັບການເລືອກເຂົ້າຮຽນຕໍ່ຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ. ສ່ວນປັດໄຈຕົວປ່ຽນຕົ້ນທີ່ບໍ່ມີອິດທິພົນຕໍ່ກັບການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ຄ່າໄລຍະສໍາຄັນທາງສະຖິຕິ P-value>0.05 ມີ 3 ຕົວປ່ຽນ ເຊັ່ນ: ດ້ານປັດໄຈຄວາມຄາດຫວັງຂອງຄອບຄົວ ($X_1$), ດ້ານປັດໄຈຕົວນັກຮຽນເອງ ($X_3$) ແລະ ດ້ານປັດໄຈທາງສັງຄົມ ($X_5$)

## 5. ອະພິປາຍຜົນ

ຈາກຜົນການວິເຄາະບັນດາດ້ານປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນປາຍຫຼູດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ດັ່ງນີ້:

*5.1 ດ້ານປັດໄຈຄວາມຄາດຫັວງຂອງຄອບຄົວ*

ຄອບຄົວລ້ວນມີອິດທິພົນຕໍ່ນັກຮຽນ ເປັນຜູ້ໃຫ້ການອົບຮົມລ້ຽງດູ ເປັນບ່ອນທໍາອິດທີ່ເຮັດໃຫ້ນັກຮຽນເກີດການຮຽນຮູ້ເພາະສະນັ້ນຄອບຄົວຈິ່ງເປັນອີກປັດໄຈສ່ຽງທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນໃນຊັ້ນມັດທະຍົມປາຍດັ່ງນີ້ ຖານະທາງເສດຖະກິດຂອງຄອບຄົວເນື່ອງຈາກປະຊາຊົນຜູ້ປົກຄອງສ່ວນໃຫຍ່ເປັນຊາວກະສິກອນໂດຍສະເພາະຜູ້ທີ່ອາໄສຢູ່ເຂດຊົນນະບົດຫຼືເຂດຫ່າງໄກສອກຫຼີກ ແລະຍັງມີລູກຫຼາຍຄົນຈິ່ງຕ້ອງຕໍ່ສູ້ກັບບັນຫາຄວາມຍາກຈົນໃນການຫາລ້ຽງຕົວເອງແລະຄອບຄົວບໍ່ມີເວລາພຽງພໍໃຫ້ກັບລູກໆໃນການເອົາໃຈໃສ່ດ້ານການຮຽນແລະດ້ານການອົບຮົມສັ່ງສອນ ນອກຈາກນີ້ບັນດາລູກທີ່ຢູ່ໃນເກນໄວຮຽນຍັງຕ້ອງໄດ້ເຮັດວຽກຊ່ວຍ ຫາເງິນຊ່ວຍຄອບຄົວບາງຄັ້ງກໍ່ຂາດຮຽນ ຫຼາຍເທື່ອຕໍ່ຫຼາຍ ຈົນເຮັດໃຫ້ອອກຈາກການຮຽນຫຼືບໍ່ໄປຮຽນຕໍ່ຊັ້ນມັດທະຍົມຕອນປາຍໃນລະບົບຂອງໂຮງຮຽນໃນທີ່ສຸດ

*5.2 ດ້ານປັດໄຈກ່ຽວກັບຄູສອນ*

ຄູສອນເປັນຜູ້ທີ່ສິດສອນນັກຮຽນ ທີ່ມີປະສົບການສອນຫຼາຍ, ການອະທິບາຍສິ່ງຄວາມຮູ້ແກ່ຜູ້ຮຽນ ຍັງບໍ່ໜັກແໜ້ນເຖິງຖອງ, ສອນພໍແລ້ວມື້ແລ້ວຊົ່ວໂມງ, ມັກຮ້າຍໃສ່ນັກຮຽນແບບບໍ່ມີເຫດຜົນ ໃນເມື່ອນັກຮຽນກະທໍາຜິດ, ຂາດຄວາມໃກ້ສິດຕິດແທດກັບຜູ້ຮຽນ, ບໍ່ໃຫ້ການແນະນໍາຊຸກຍູ້ແກ່ນັກຮຽນ ແລະ ຄູອາຈານເມື່ອໄດ້ລົງສອນແລ້ວ ກໍ່ບໍ່ເຄີຍໄດ້ເຂົ້າຮ່ວມຝຶກອົບຮົມວິຊາສະເພາະ ທັງນີ້ກໍ່ເນື່ອງຈາກວ່າ ຄູສອນດີ ນັກຮຽນຮຽນເກັ່ງ, ຄູຮັກລູກສິດ, ລູກສິດກໍ່ເຄົາລົບນັບຖືຄູ, ສະນັ້ນ, ຄູຈຶ່ງຕ້ອງເປັນ ຜູ້ສ້າງຄວາມກະຕຸ້ນ ສ້າງແຮງຈູງໃຈໃຫ້ແກ່ຜູ້ຮຽນໄດ້ເປັນຢ່າງດີ ແລະ ຄູສອນມີປະສົບການສອນຫຼາຍປີ, ມີມະນຸດສໍາພັນດີກັບນັກຮຽນ ໃຫ້ການຊຸກຍູ້ຊ່ວຍເຫຼືອ ທາງການຮຽນ ແລະ ເປັນທີ່ປຶກສາທຸກບັນຫາ ປຽບເໝືອນອ້າຍເອື້ອຍນ້ອງຂອງຕົວນັກຮຽນ ແລະ ຄູສອນໃຊ້ວິທີການສອນທີ່ດຶງດູດຈິດໃຈຂອງຜູ້ຮຽນທັງເສີມແຮງຈູງໃຈທາງບວກແກ່ຜູ້ຮຽນ ເຊິ່ງການຄົ້ນຄວ້ານີ້ສອດຄ່ອງກັບບົດຄົ້ນຄວ້າຂອງທ່ານ Siriopha et al. (2021) ພົບວ່າປັດໄຈຂອງຜູ້ບໍລິຫານ ໂຮງຮຽນ, ຄູສອນ, ຫຼັກສູດ ແລະ ການມີສ່ວນຮ່ວມ ຂອງພໍ່ແມ່ປະຊາຊົນ ແລະ ຊຸມຊົນມີຄວາມສໍາພັນທາງດ້ານຄຸນນະພາບຂອງນັກຮຽນໃນລະດັບສູງສຸດ ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງທ່ານ Lohday (2022) ພົບວ່າ ປັດໄຈດ້ານຄູແມ່ນປັດໄຈທີ່ມີຜົນກະທົບສູງສຸດຕໍ່ຜົນການຮຽນໃນກຸ່ມວິຊາພາສາອັງກິດທຸລະກິດ ທັງນີ້ກໍ່ເນື່ອງຈາກວ່າ ຄູສອນມີທັກສະການສອນທີ່ດີ, ເປັນທີ່ປຶກສາທີ່ດີແກ່ນັກຮຽນ.

*5.3 ດ້ານປັດໄຈກ່ຽວກັບຕົວນັກຮຽນເອງ*

ດ້ານຜູ້ຮຽນກ່ຽວຂ້ອງກັບຮ່າງກາຍ ຈິດໃຈ ອາລົມ ສະຕິປັນຍາ ຄ່ານິຍົມ ສັງຄົມ ເຈດຕະຄະຕິ ພຶດຕິກຳ ຄວາມສຳພັນທາງສັງຄົມ ພື້ນຖານຄວາມຮູ້ຂອງຄອບຄົວ ເພາະສິ່ງຕ່າງໆເຫຼົ່ານີ້ຈະສະແດງອອກໃນຊ່ວງໄວຫຼຸ້ມຂອງນັກຮຽນເປັນສ່ວນໃຫຍ່ເນື່ອງຈາກເປັນຊ່ວງປ່ຽນແປງທາງຮ່າງກາຍໄວຈະເລີນພັນຈາກເດັກກ້າວໄປສູ່ຄວາມເປັນຜູ້ໃຫຍ່ ດັ່ງນັ້ນ ໃນການຈັດການສຶກສາຈຶ່ງຕ້ອງຄຳນຶງເຖິງອົງປະກອບສຳຄັນຂອງລະບົບການສຶກສາ ຄວາມຕ້ອງການ ຄວາມສົນໃຈ ແລະຄວາມມຸ່ງຫວັງຕໍ່ການຮຽນ ສ່ວນບັນຫາກ່ຽວກັບຜູ້ຮຽນແມ່ນບໍ່ມີຄວາມພ້ອມໃນການຮຽນ ກ່ຽວພັນຢາເສບຕິດ ເນື້ອຫາວິຊາທີ່ຮຽນຍາກເກີນໄປ ການປັບຕົວເຂົ້າກັບສະພາບແວດລ້ອມ ໝູ່ເພື່ອນໄດ້ຍາກ ແບ່ງເວລາຮຽນບໍ່ເໝາະສົມ ຂາດຄວາມພະຍາຍາມ ຂາດຄວາມຕັ້ງໃຈໃນການຮຽນ ແຕ່ຢ່າງໃດກໍ່ຕາມການທີ່ນັກຮຽນເລືອກທີ່ຈະບໍ່ຮຽນຕໍ່ຊັ້ນມັດທະຍົມຕອນປາຍອາດຈະມາຈາກສາເຫດໃດໜຶ່ງທີ່ມີອົງປະກອບອື່ນເຂົ້າມາກ່ຽວຂ້ອງນອກຈາກສິ່ງກ່າວມາ.

*5.4 ດ້ານປັດໄຈທາງເສດຖະກິດ*

ດ້ານປັດໄຈທາງເສດຖະກິດທີ່ມີຜົນຕໍ່ການເລືອກເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມປາຍຫຼຸດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ເພາະວ່າ ການສົ່ງລູກເຕົ້າເຂົ້າຮຽນຕໍ່ຊັ້ນທີ່ສູງຂຶ້ນ ການໃຊ້ຈ່າຍຕ່າງໆ ກໍ່ສູງຂຶ້ນໄປນຳ ອີງໃສ່ສະພາບການດຳລົງຊີວິດໃນປະຈຸບັນ, ນັກຮຽນບາງຄົນ ທີ່ຄອບຄົວມີເສດຖະກິດດີຈຶ່ງຕ້ອງເລືອກຮຽນຕໍ່ຊັ້ນທີ່ສູງໄດ້ ແຕ່ກົງກັນຂ້າມ ນັກຮຽນສ່ວນໃຫຍ່ມີຖານະຄອບຄົວພໍຢູ່ພໍກິນ ເລືອກທີ່ບໍ່ຮຽນຕໍ່ ຍ້ອນວ່າການຮຽນຕ້ອງໄດ້ໃຊ້ເງິນ ເຊິ່ງສອດຄ່ອງກັບ ການຄົ້ນຄວ້າຂອງທ່ານ Nurmalitasari et al. (2023) ພົບວ່າ ດ້ານປັດໄຈທາງເສດຖະກິດ ແມ່ນ ມີອິດທິພົນຫຼາຍທີ່ສຸດຕໍ່ກັບນັກຮຽນທີ່ເລີກຮຽນໃນການສຶກສາຊັ້ນສູງ ແລະ ສອດຄ່ອງ ກັບການຄົ້ນຄວ້າຂອງທ່ານ ແກ້ວບົວລະເພັດ ແລະ ຄະນະ (2021) ພົບວ່າ ນັກຮຽນມາສອບເສັງເຂົ້າຮຽນ ຢູ່ ມສ ຫຼຸດລົງ ຢູ່ໃນລະດັບປານກາງ ເຊັ່ນ ມີຄວາມຫຍຸ້ງຍາກ ໃນການເດີນທາງ, ພັກເຊົາ ແລະ ມີຄ່າໃຊ້ຈ່າຍສູງ ນອກນັ້ນຍັງສອດຄ່ອງກັບ ການຄົ້ນຄວ້າຂອງທ່ານ Intharapan et al. (2020) ພົບວ່າປັດໄຈທີ່ກ່ຽວຂ້ອງກັບການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນຕໍ່ຊັ້ນມັດທະຍົມປີທີ 4 ແມ່ນ ປັດໄຈດ້ານສື່ສຽງຂອງໂຮງຮຽນ ແລະ ປັດໄຈດ້ານຄ່າໃຊ້ຈ່າຍ ທັງນີ້ກໍ່ເນື່ອງຈາກວ່າ ພໍ່ແມ່ຜູ້ປົກຄອງ ແລະ ຕົວນັກຮຽນເອງ ກໍ່ຄຳນຶງເຖິງຄ່າໃຊ້ຈ່າຍໃນການສຶກສາຮ່ຳຮຽນ ເພາະການຮຽນຕ້ອງໄດ້ໃຊ້ຈ່າຍ ເພື່ອການລ້ຽງຊີບໃນແຕ່ລະມື້.

*5.5 ດ້ານປັດໄຈທາງສັງຄົມ*

ດ້ານສັງຄົມລວມໄປເຖິງສະພາບແວດລ້ອມອ້ອມຂ້າງນັ້ນ ມີຜົນຕໍ່ການຮຽນຂອງນັກຮຽນເຊັ່ນ ສະພາບແວດລ້ອມທາງບ້ານ ການຍ້າຍຖິ່ນຖານບ້ານອາໄສໄປຢູ່ແຫ່ງໃຫມ່ ແລະຄວາມສຳພັນລະຫວ່າງໂຮງຮຽນກັບຊຸມຊົນ ອັນເນື່ອງມາຈາກບັນຫາເສດຖະກິດ ມີຄວາມສຳພັນກັບຄຸນນະພາບການສຶກສາຄືປະຊາກອນທີ່ອາໄສຢູ່ເຂດພື້ນທີ່ ທີ່ກັນດານ ຫ່າງໄກສອກຫຼີກມັກຍ້າຍໄປຢູ່ເຂດທີ່ມີເສດຖະກິດດີຫາເງິນງ່າຍກວ່າ.

## 6. ສະຫຼຸບຜົນ

ຜົນການສຶກສາປັດໄຈທີ່ສົ່ງຜົນຕໍ່ກັບການເລືອກເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍຫຼຸດລົງ ທີ່ເມືອງປາກແຊງ ແຂວງຫຼວງພະບາງ ເມື່ອພິຈາລະນາເປັນລາຍດ້ານ ຂອງດ້ານປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນ ດ້ານປັດໄຈຄວາມຄາດຫວັງຂອງຄອບຄົວ ດ້ານປັດໄຈຄູສອນ ດ້ານປັດໄຈຕົວນັກຮຽນເອງ ດ້ານປັດໄຈທາງເສດຖະກິດ ແລະ ດ້ານປັດໄຈທາງສັງຄົມ ພົບວ່າ ທັງ 6ດ້ານ ແມ່ນຢູ່ໃນລະດັບຫຼາຍ ໃນນັ້ນລຽງເປັນລາຍດ້ານຈາກຫຼາຍໄປຫາໜ້ອຍແມ່ນ ດ້ານປັດໄຈຄູສອນ ຮອງລົງມາແມ່ນ ດ້ານປັດໄຈທາງເສດຖະກິດ ທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມຕອນປາຍ.

## 7. ຂໍ້ສະເໜີແນະ

- ສະເໜີແນະສຳລັບໂຮງຮຽນຊັ້ນມັດທະຍົມທົ່ວເມືອງປາກແຊງແຂວງຫຼວງພະບາງຄວນຈັດໃຫ້ມີການຖອດຖອນບົດຮຽນກ່ຽວກັບດ້ານການສິດສອນຂອງຄູ-ອາຈານ ເພື່ອປັບປຸງການສິດສອນໃຫ້ດີຂຶ້ນໂດຍນຳໃຊ້ຫຼາກຫຼາຍເທັກນິກເພື່ອສ້າງແຮງຈູງໃຈໃຫ້ແກ່ນັກຮຽນເພື່ອສືບຕໍ່ການຮຽນຈົນຈົບມັດທະຍົມປາຍຕາມເກນອາຍຸ, ໜ່ວຍງານດ້ານການສຶກສາ ແລະ ຜູ້ສ້າງນະໂຍບາຍໃຫ້ຄວາມເຂົ້າໃຈກ່ຽວກັບວິທີການທີ່ໂຮງຮຽນສາມາດກະກຽມນັກຮຽນໄດ້ດີຂຶ້ນໃນການຕັດສິນໃຈກ່ຽວກັບການສຶກສາຂັ້ນສູງ.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

- ການເຂົ້າເຖິງຂໍ້ມູນອາດບໍ່ສາມາດເຂົ້າເຖິງນັກຮຽນໄດ້ທຸກຄົນເຊັ່ນ ນັກຮຽນທີ່ບໍ່ໄດ້ຮຽນຕໍ່ ຫຼື ອອກໄປເຮັດວຽກບ່ອນອື່ນ.
- ຄວາມຈິງໃຈຂອງຜູ້ຕອບແບບສອບຖາມ ນັກຮຽນບາງຄົນອາດບໍ່ຕອບຕາມຄວາມເປັນຈິງ ສົ່ງຜົນໃຫ້ຂໍ້ມູນຄາດເຄື່ອນ.
- ຫາກໃຊ້ຂໍ້ມູນທີ່ບໍ່ອັບເດດ ອາດເຮັດໃຫ້ຜົນຂອງການສຶກສາບໍ່ສະທ້ອນເຖິງສະຖານະການໃນປະຈຸບັນ.

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2025). *ແຜນຍຸດທະສາດການສຶກສາ 5ປີ.* ສະຖາບັນຜູ້ບໍລິຫານການສຶກສາ, ກົມສາມັນສຶກສາ. ລາວ: ກະຊວງສຶກສາທິການ ແລະ ກິລາ.

ແກ້ວບົວລະເພັດ ແລະ ຄະນະ. (2021). *ການສຶກສາເຫດທີ່ພາໃຫ້ຈຳນວນນັກຮຽນມາສອບເສັງ ແລະ ລົງທະບຽນເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງ ຫຼຸດລົງ, ກໍລະນີ ສຶກສາ: ມະຫາວິທະຍາໄລ ສຸພານຸວົງ.* ມະຫາວິທະຍາໄລ ສຸພານຸວົງ.

ຫ້ອງການສຶກສາທິການ ແລະ ກິລາເມືອງປາກແຊງ. (2023). *ບົດລາຍງານກາງສະໄໝ.* ລາວ: ຫ້ອງການສຶກສາທິການ ແລະ ກິລາເມືອງປາກແຊງ.

Intharapan, P., Phuangsomjit, C., & Buathong, S. (2020). Factors Affecting Parents’ Decision Making in Sending Therir Children to Study at Mattayom Suksa IV Level at the Princess Chulaphorn’s Science High School in the Central and Eastern Regions. *Panyapiwat Journal*, *12*(3), 270-283.

Lohday, K. (2022). Influencing factors of students’ learning achievement in business english courses at valaya alongkorn Rajabhat university under the royal patronage. *Valaya alongkorn review (Humanities and social science)*, *12*(2), 61-74.

Nurmalitasari, Awang Long, Z., & Faizuddin Mohd Noor, M. (2023). Factors influencing dropout students in higher education. *Education Research International*, *2023*(1), 7704142.

Siriopha, P., Mangkang, P., & Koolnapadol, A. (2021). Factors affecting learner quality in basic educational institutions under Sa Kaeo primary educational service area office 1. *Journal of graduate research*, *12*(1), 107-122.

## ແບບສອບຖາມ

### ກ່ຽວກັບສຶກສາປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລິງທີ່ເມືອງປາກແຊງ

**ຄໍາຊີ້ແຈງ:** ແບບສອບຖາມນີ້ ເປັນແບບສອບຖາມທີ່ຜູ້ວິໄຈໃຊ້ໃນການສຶກສາປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລິງທີ່ເມືອງປາກແຊງ ຂໍໃຫ້ຜູ້ຕອບແບບສອບຖາມໄດ້ກະລຸນາຕອບແບບສອບຖາມທຸກຂໍ້ດ້ວຍຄວາມຄິດເຫັນທີ່ແທ້ຈິງຂອງທ່ານ. ທຸກຄໍາຕອບ ແລະ ຄໍາສະເໜີຂອງທ່ານລ້ວນແຕ່ມີປະໂຫຍດ ແລະ ບໍ່ມີຜົນກະທົບຕໍ່ທ່ານແຕ່ຢ່າງໃດ.

**ສ່ວນທີ່1:** ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ

**ຄໍາຊີ້ແຈງ:** ກະລຸນາໃຊ້ເຄື່ອງໝາຍ √ ໃສ່ໃນຫ້ອງ □ ທີ່ກົງກັບຄວາມເປັນຈິງ

ກໍາລັງຮຽນຢູ່ໂຮງຮຽນ: 1. □ມັດທະຍົມສົມບູນ ປາກເກງ

2. □ມັດທະຍົມສົມບູນ ສົບແຈກ

3. □ມັດທະຍົມສົມບູນ ປາກແຊງ

1. ເພດ: □ ຍິງ □ ຊາຍ
2. ອາຍຸ: □ 1) 13 ປີ □ 4) 16 ປີ
   □ 2) 14 ປີ □ 5) 17 ປີ
   □ 3) 15 ປີ □ 6) 18 ປີ

**ສ່ວນທີ່2:** ການສອບຖາມຄວາມຄິດເຫັນກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼູດລິງທີ່ເມືອງປາກແຊງ

**ຄໍາຊີ້ແຈງ:** ກະລຸນາໃສ່ເຄື່ອງໝາຍ √ ລົງໃນຫ້ອງລະດັບຄວາມຄິດເຫັນທີ່ກົງກັບຄວາມຄິດເຫັນຂອງທ່ານ

5 ໝາຍເຖິງນັກຮຽນມີຄວາມຄິດເຫັນຫຼາຍທີ່ສຸດ

4 ໝາຍເຖິງນັກຮຽນມີຄວາມຄິດເຫັນຫຼາຍ

3 ໝາຍເຖິງນັກຮຽນມີຄວາມຄິດເຫັນປານກາງ

2 ໝາຍເຖິງນັກຮຽນມີຄວາມຄິດເຫັນໜ້ອຍ

1 ໝາຍເຖິງນັກຮຽນມີຄວາມຄິດເຫັນໜ້ອຍທີ່ສຸດ.

| ລ/ດ | ເນື້ອໃນ | ລະດັບຄວາມຄິດເຫັນ | | | | |
|---|---|---|---|---|---|---|
| | | 5 | 4 | 3 | 2 | 1 |
| I. | **ດ້ານທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນ** | | | | | |
| 1. | ຊື່ສຽງຂອງໂຮງຮຽນເປັນທີ່ຍອມຮັບຈາກພາກສ່ວນຕ່າງໆ | | | | | |
| 2. | ນັກຮຽນມີຄວາມເຊື່ອໝັ້ນໃນປະສິດທິພາບຂອງຫຼັກສູດ | | | | | |
| 3. | ນັກຮຽນມີຄວາມເຊື່ອໝັ້ນໃນການສິດສອນຂອງຄູ | | | | | |
| 4. | ມີຊຸດເຄື່ອງແບບ ແລະ ອຸປະກອນການຮຽນຄົບຊຸດ | | | | | |
| 5. | ມີຫ້ອງຮຽນທີ່ໄດ້ມາດຕະຖານ ແລະ ບັນຍາກາດດີ | | | | | |
| 6. | ມີຫໍຂ່າວ,ຫ້ອງສະໝຸດ ແລະ ຫ້ອງຄອມພິວເຕີເພື່ອໃຊ້ເປັນແຫຼ່ງຮຽນຮູ້ຮັບຂໍ້ມູນຕ່າງໆ | | | | | |
| 7. | ການສະໜັບສະໜູນກິດຈະກໍາ, ການໃຫ້ບໍລິການນັກຮຽນ ສະດວກວ່ອງໄວ | | | | | |
| 8. | ນັກຮຽນຄິດວ່າທຶນການສຶກສາມີຜົນຕໍ່ການຕັດສິນໃຈໃນການເລືອກຮຽນ | | | | | |
| 9. | ໄລຍະທາງທຽວຈາກບ້ານໄປຫາໂຮງຮຽນອໍານວຍຄວາມສະດວກ | | | | | |
| 10. | ມີຫໍພັກຮອງຮັບພຽງພໍ ສໍາລັບນັກຮຽນທີ່ຢູ່ບ້ານໄກ | | | | | |
| II. | **ດ້ານຄວາມຄາດຫັວງຂອງຄອບຄົວ** | | | | | |
| 11. | ຄອບຄົວຕ້ອງການໃຫ້ຮຽນຈົບຊັ້ນມັດທະຍົມປາຍ | | | | | |

| | | | | | | |
|---|---|---|---|---|---|---|
| 12. | ຄອບຄົວຫວັງໃຫ້ມີວຽກເຮັດງານທຳທີ່ເໝາະສົມ, ມີຄວາມກ້າວໜ້າ ແລະ ໝັ້ນຄົງ | | | | | |
| 13. | ຄອບຄົວຕ້ອງການໃຫ້ລູກຊ່ວຍເຫຼືອດ້ານການເງິນ ແລະ ວຽກງານ | | | | | |
| 14. | ຄອບຄົວສະໜັບສະໜູນຄ່າໃຊ້ຈ່າຍໃນການຮຽນຕໍ່ ຈຶ່ງຕ້ອງເລືອກຕາມທີ່ກຳນົດ | | | | | |
| 15. | ຄອບຄົວຄາດຫວັງໃຫ້ທຸກຄົນຮຽນຈົບຊັ້ນມັດທະຍົມຕອນປາຍ | | | | | |
| **III.** | **ດ້ານຄູສອນ** | | | | | |
| 16. | ຄູສອນມີປະສົບການ, ມີຄວາມຮູ້ຄວາມສາມາດດ້ານວິຊາສະເພາະ | | | | | |
| 17. | ການອະທິບາຍບົດຮຽນ, ສິ່ງຄວາມຮູ້ຂອງຄູຈະແຈ້ງ ແລະ ທົ່ວເຖິງ | | | | | |
| 18. | ຄູຕິດຕາມໃກ້ສິດ ແລະ ໃຫ້ການຊ່ວຍເຫຼືອນັກຮຽນເວລາເຮັດກິດຈະກຳ | | | | | |
| 19. | ຄູໄດ້ຮັບການສົ່ງເສີມ ແລະ ພັດທະນາເລື້ອຍໆ | | | | | |
| 20. | ຄູໃຫ້ຄຳປຶກສາ, ແນະແນວແກ່ນັກຮຽນເວລາມີບັນຫາດ້ານຕ່າງໆ | | | | | |
| **IV.** | **ດ້ານຕົວນັກຮຽນເອງ** | | | | | |
| 21. | ນັກຮຽນເລືອກຮຽນຕາມຜົນການສອບເສັງຂອງຕົວເອງ | | | | | |
| 22. | ນັກຮຽນເລືອກຮຽນຕາມຄວາມຮູ້ຄວາມສາມາດຂອງຕົວເອງ ແລະ ຄອບຄົວ | | | | | |
| 23. | ນັກຮຽນເລືອກຮຽນຕາມຈຸດມຸ່ງໝາຍ ແລະ ອະນາຄົດຂອງຕົວເອງ | | | | | |
| 24. | ນັກຮຽນເລືອກຮຽນຕາມຄວາມສົນໃຈຂອງຕົວເອງ | | | | | |
| 25. | ນັກຮຽນເລືອກຮຽນຕາມຂະບວນການນຳໝູ່ເພື່ອນ | | | | | |
| 26. | ນັກຮຽນເລືອກຮຽນຕາມລາຍໄດ້ຂອງຄອບຄົວ | | | | | |
| 27. | ນັກຮຽນເລືອກຮຽນຕາມຄ່ານິຍົມ ແລະ ຈາກສື່ຕ່າງໆ | | | | | |
| **V.** | **ດ້ານເສດຖະກິດ** | | | | | |
| 28. | ເສດຖະກິດຂອງຄອບຄົວເອື້ອອຳນວຍໃນການສົ່ງລູກຮຽນ | | | | | |
| 29. | ເສດຖະກິດການເງິນຂອງຄອບຄົວມີຄວາມໝັ້ນຄົງ | | | | | |
| 30. | ມີລາຍໄດ້ພຽງພໍຕໍ່ກັບເສດຖະກິດໃນປະຈຸບັນ | | | | | |
| 31. | ມີທີ່ຢູ່ອາໄສທີ່ໝັ້ນຄົງບໍ່ໄດ້ຍົກຍ້າຍໄປຫາເງິນທີ່ແຫ່ງອື່ນ | | | | | |
| 32. | ຜູ້ປົກຄອງໃຫ້ເງິນໃຊ້ຈ່າຍໄປໂຮງຮຽນພຽງພໍ | | | | | |
| 33. | ຜູ້ປົກຄອງມີເງິນພຽງພໍໃນການຊື້ເຄື່ອງນຸ່ງ, ປຶ້ມແບບຮຽນ ແລະ ອື່ນໆ | | | | | |
| 34. | ລາຍໄດ້ຂອງຄອບຄົວມາຈາກການເຮັດກະຊິກຳຫຼາຍກວ່າພາກສ່ວນອື່ນ | | | | | |
| **VI.** | **ດ້ານສັງຄົມ** | | | | | |
| 35. | ສະພາບແວດລ້ອມອ້ອມຂ້າງຂອງບ້ານມີຄວາມເໝາະສົມ | | | | | |
| 36. | ຜູ້ຄົນສ່ວນໃຫຍ່ໃນໝູ່ບ້ານເປັນຄົນມີຖານະດີ | | | | | |
| 37. | ຮຸ່ນອ້າຍເອື້ອຍສ່ວນຫຼາຍຮຽນຈົບຊັ້ນມັດທະຍົມຕອນປາຍ | | | | | |
| 38. | ຜູ້ທີ່ຮຽນຈົບໄປສ່ວນຫຼາຍມີວຽກເຮັດງານທຳທີ່ດີ | | | | | |
| 39. | ຄົນຮຸ່ນດຽວກັນສ່ວນຫຼາຍບໍ່ປະລະການຮຽນ | | | | | |
| 40. | ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອດ້ານຕ່າງໆຈາກສັງຄົມອ້ອມຂ້າງ | | | | | |
| 41. | ໄດ້ຮັບການລົງລະດົມຊຸກຍູ້ເລື່ອງການເຂົ້າຮຽນຈົບຊັ້ນມັດທະຍົມຕອນປາຍຕາມເກນອາຍຸຈາກພາກສ່ວນລັດ | | | | | |

**ຕອນທີ່: 3** ຂໍ້ສະເໜີແນະກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການເລືອກເຂົ້າຮຽນຊັ້ນມັດທະຍົມຕອນປາຍຫຼຸດລົງທີ່ເມືອງປາກແຊງ

..........................................................................................................................................................

..........................................................................................................................................................

ຂໍຂອບໃຈທຸກທ່ານທີ່ໃຫ້ຄວາມຮ່ວມມືໃນການຕອບແບບສອບຖາມ